ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ບົດແນະນຳ

## ກ່ຽວກັບ ການພັດທະນາ ແລະ ການພິຈາລະນາ

## ໂຄງການກົນໄກການພັດທະນາສະອາດ ຢູ່ ສປປ ລາວ

# Guidelines
# on Development and Consideration of
# Proposed Clean Development Mechanism Projects
# in Lao PDR

ນະຄອນຫຼວງວຽງຈັນ, ພະຈິກ 2012

ພະຈິກ 2012

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

___________000___________

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເລກທີ 7912 /ກຊສ

ນະຄອນຫຼວງວຽງຈັນ, ວັນທີ......13 ພະຈິກ 2012......

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ບົດແນະນຳ ກ່ຽວກັບ ການພັດທະນາ ແລະ ການພິຈາລະນາ ໂຄງການ ກົນໄກການພັດທະນາສະອາດ ຢູ່ ສປປ ລາວ

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 02/99/ສພຊ, ລົງວັນທີ 03 ເມສາ 1999;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 435/ນຍ, ລົງວັນທີ 28 ພະຈິກ 2011;
- ອີງຕາມ ການສະເໜີ ຂອງກົມຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ ສະບັບ ເລກທີ 250/ກຊສ.ກພປ, ລົງວັນທີ5 ພະຈິກ 2012.

ລັດຖະມົນຕີ ວ່າການ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕົກລົງ:

ມາດຕາ 1. ຮັບຮອງ ແລະ ປະກາດໃຊ້ ບົດແນະນຳ ກ່ຽວກັບ ການພັດທະນາ ແລະ ການພິຈາລະນາ ໂຄງການກົນໄກການພັດທະນາສະອາດ ຢູ່ ສປປ ລາວ, ສະບັບ ເດືອນ ພະຈິກ 2012.

ມາດຕາ 2. ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງ ທີ່ມີຈຸດປະສົງ ຕ້ອງການພັດທະນາ ໂຄງການກົນໄກການພັດທະນາສະອາດຢູ່ ສປປ ລາວ ຕ້ອງໄດ້ເອົາໃຈໃສ່ ແລະ ປະຕິບັດຕາມບົດແນະນຳ ກ່ຽວກັບ ການພັດທະນາ ແລະ ການພິຈາລະນາ ໂຄງການ ກົນໄກການພັດທະນາສະອາດ ຢູ່ ສປປ ລາວ ສະບັບນີ້ ຢ່າງເຂັ້ມງວດ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ພ້ອມທັງດຳເນີນການໃຫ້ຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍພາຍໃນ ແລະ ລະບຽບຫລັກການສາກົນ ທີ່ກ່ຽວຂ້ອງ.

ມາດຕາ 3. ມອບໝາຍໃຫ້ ກົມຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນໃຈກາງປະສານສົມທົບ ກັບບັນດາຂະແໜງການທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ເພື່ອເຄື່ອນໄຫວໂຄສະນາເຜີຍແຜ່ ແລະ ຈັດຕັ້ງຜັນຂະຫຍາຍ ຂໍ້ຕົກລົງສະບັບນີ້ ໃຫ້ເປັນອັນລະອຽດໃນການປະຕິບັດ.

ມາດຕາ 4. ຫ້ອງການ, ກົມ, ສະຖາບັນ, ກອງ ແລະ ສູນ ອ້ອມຂ້າງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງ ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງທັງພາກລັດ ແລະ ເອກະຊົນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 5. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນ ທີ່ລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີ ວ່າການ

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ບູລົມ ສິນບັນດິດ

# ສາລະບານ


ໜ້າ

1. ພາກສະເໜີ 1

2. ຈຸດປະສົງ ແລະ ເປົ້າໝາຍ 1

3. ອະທິບາຍຄໍາສັບ 1

4. ກົນໄກການພັດທະນາສະອາດ ຢູ່ ສປປ ລາວ 4

   4.1 ກົນໄກການພັດທະນາສະອາດ 4

   4.2 ຄວາມເປັນມາ ກ່ຽວກັບ ກົນໄກການພັດທະນາສະອາດ ຢູ່ ສປປ ລາວ 4

   4.3ນະໂຍບາຍ ແລະ ອົງການຮັບຜິດຊອບ ກົນໄກການພັດທະນາສະອາດແຫ່ງຊາດ 5

   4.4 ການພັດທະນາ ໂຄງການກົນໄກການພັດທະນາສະອາດ 6

   4.5 ການພິຈາລະນາ ໂຄງການກົນໄກການພັດທະນາສະອາດ 7


**ເອກະສານຊ້ອນທ້າຍ**


- ເອກະສານຊ້ອນທ້າຍ 1: ໂຄງສ້າງ ກົງຈັກ ອົງການ ຮັບຜິດຊອບ ກົນໄກການພັດທະນາສະອາດ ແຫ່ງຊາດ 10
- ເອກະສານຊ້ອນທ້າຍ 2: ຕາຕະລາງ ມາດຕະຖານ ແລະ ການປະເມີນ ການພັດທະນາ ແບບຍືນຍົງສໍາລັບ ໂຄງການ ກົນໄກການພັດທະນາສະອາດ ຢູ່ ສປປ ລາວ 11

## 1. ພາກສະເໜີ

ການປ່ຽນແປງດິນຟ້າອາກາດ ຖືເປັນບັນຫາສຳຄັນ ແລະ ເຄັ່ງຮ້ອນ, ຊຶ່ງໄດ້ຮຽກຮ້ອງໃຫ້ບັນດາປະຊາຊາດໃນໂລກ ຕ້ອງໄດ້ຮ່ວມມືຮ່ວມແຮງກັນຢ່າງຈິງຈັງ ໃນການປ້ອງກັນ, ສະກັດກັ້ນ ແລະ ແກ້ໄຂຫລຸດຜ່ອນ ພາວະໂລກຮ້ອນ, ໂດຍສະເພາະ ການຫລຸດຜ່ອນການປ່ອຍອາຍພິດເຮືອນແກ້ວອອກສູ່ບັນຍາກາດໂລກ.

ກົນໄກການພັດທະນາສະອາດ ເປັນກົນໄກຮ່ວມມືໜຶ່ງ ທີ່ໄດ້ຮັບການສ້າງຕັ້ງຂຶ້ນມາ ພາຍໃຕ້ອະນຸສັນຍາກຽວໂຕ ເພື່ອຊ່ວຍເຫລືອບັນດາປະເທດພາຄີ ທີ່ພັດທະນາແລ້ວ ໃຫ້ມີຄວາມສາມາດປະຕິບັດພັນທະຂອງຕົນ ໃນການຫລຸດຜ່ອນ ການປ່ອຍອາຍພິດເຮືອນແກ້ວ ໂດຍຮູບການລົງທຶນ ແລະ ການຖ່າຍທອດເຕັກໂນໂລຊີ ທີ່ເປັນມິດກັບສິ່ງແວດລ້ອມ ປະກອບສ່ວນ ຊ່ວຍເຫລືອບັນດາປະເທດພາຄີທີ່ກຳລັງພັດທະນາ ໃຫ້ບັນລຸ ການພັດທະນາໄປຕາມທິດທາງແບບຍືນຍົງ.

ເຖິງແມ່ນວ່າ, ສປປ ລາວ ບໍ່ໄດ້ເປັນປະເທດທີ່ມີພັນທະ ພາຍໃຕ້ສົນທິສັນຍາສາກົນ ໃນການຫລຸດຜ່ອນການປ່ອຍອາຍພິດເຮືອນແກ້ວກໍຕາມ, ແຕ່ນະໂຍບາຍຂອງລັດຖະບານ ແມ່ນໄດ້ໃຫ້ການສະໜັບສະໜູນ ແລະ ສົ່ງເສີມຢ່າງແຂງແຮງ ການພັດທະນາໂຄງການ ກົນໄກການພັດທະນາສະອາດ ຢູ່ ສປປ ລາວ ເພື່ອໄດ້ມີສ່ວນຮ່ວມ ແລະ ປະກອບສ່ວນ ແກ້ໄຂພາວະໂລກຮ້ອນ ເໝືອນກັບບັນດາປະເທດອື່ນໃນໂລກ.

## 2. ຈຸດປະສົງ ແລະ ເປົ້າໝາຍ

ບົດແນະນຳກ່ຽວກັບການພັດທະນາແລະ ການພິຈາລະນາໂຄງການ ກົນໄກການພັດທະນາສະອາດ ຢູ່ ສປປ ລາວ ສະບັບນີ້ ສ້າງຂຶ້ນມາ ໂດຍມີຈຸດປະສົງເພື່ອອະທິບາຍ ແລະ ຊີ້ແຈງ ກ່ຽວກັບ ຄວາມເປັນມາ, ນະໂຍບາຍ ແລະ ອົງການຮັບຜິດຊອບ ກົນໄກການພັດທະນາສະອາດແຫ່ງຊາດ; ຫລັກການພັດທະນາ ແລະ ຂັ້ນຕອນການພິຈາລະນາໂຄງການກົນໄກການພັດທະນາສະອາດຢູ່ ສປປ ລາວ, ຊຶ່ງມີເປົ້າໝາຍແນໃສ່ ເຮັດໃຫ້ຜູ້ພັດທະນາໂຄງການກົນໄກການພັດທະນາສະອາດ ໄດ້ມີຄວາມເຂົ້າໃຈ ພ້ອມທັງປະຕິບັດຢ່າງເປັນເອກະພາບ, ຖືກຕ້ອງ ແລະ ສອດຄ່ອງ ກັບລະບຽບກົດໝາຍພາຍໃນ ສປປ ລາວ ແລະ ລະບຽບຫລັກການ ກໍຄື ບົດແນະນຳຕ່າງໆ ທີ່ສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ແລະ ອະນຸສັນຍາກຽວໂຕວາງອອກ.

## 3. ອະທິບາຍຄຳສັບ

**- ສະພາບໍລິຫານກົນໄກການພັດທະນາສະອາດສາກົນ (CDM Excutive Board)** ໝາຍເຖິງ ສະພາບໍລິຫານທີ່ຖືກແຕ່ງຕັ້ງຂຶ້ນຢ່າງເປັນທາງການ ໂດຍພາຍໃຕ້ ສິດອຳນາດ ແລະ ການແນະນຳຂອງ ກອງປະຊຸມສຸດຍອດຂອງບັນດາປະເທດພາຄີສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ແລະ ອະນຸສັນຍາກຽວໂຕ ເພື່ອເຮັດໜ້າທີ່ຊີ້ນຳການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງບໍລິຫານ ກົນໄກການພັດທະນາສະອາດ;

- **ອົງການຮັບຜິດຊອບ ກົນໄກການພັດທະນາສະອາດ ແຫ່ງຊາດ** (Designated National Authority) ໝາຍເຖິງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ໃນນາມຕາງໜ້າ ລັດຖະບານ ຮັບຜິດຊອບ ການພິຈາລະນາ ຮັບຮອງເອົາໂຄງການກົນໄກການພັດທະນາສະອາດ ຢູ່ ສປປ ລາວ ໂດຍແມ່ນ ກົມຄຸ້ມໄພພິບັດແຫ່ງ ຊາດ ແລະ ການປ່ຽນແປງດິນຟ້າອາກາດ ເຮັດໜ້າທີ່ເປັນເສນາທິການ ໃຫ້ແກ່ ກຊສ ຕໍ່ກັບວຽກງານດັ່ງກ່າວ;

- **ອົງກອນດຳເນີນງານສາກົນ** (Designated Operational Entity) ໝາຍເຖິງ ການຈັດຕັ້ງໜຶ່ງ ທີ່ເອກະລາດ, ໄດ້ຮັບການສ້າງຕັ້ງຂຶ້ນໂດຍຖືກຕ້ອງຕາມກົດໝາຍ ພາຍໃຕ້ການແນະນຳ ຂອງສະພາບໍລິຫານກົນໄກການພັດທະນາ ສະອາດສາກົນ ແລະ ຕາມການຕົກລົງເຫັນດີຂອງ ກອງປະຊຸມລັດພາຄີສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າ ອາກາດ ແລະ ອະນຸສັນຍາກຽວໂຕ ເພື່ອເຮັດໜ້າທີ່ເປັນຜູ້ຢັ້ງຢືນຄວາມຖືກຕ້ອງຄົບຖ້ວນ ຂອງໂຄງການກົນໄກການ ພັດທະນາສະອາດ ທີ່ກຳລັງສະເໜີ ແລະ ຢັ້ງຢືນການຫລຸດລົງ ອາຍພິດເຮືອນແກ້ວ ຈາກການປະຕິບັດບັນດາກິດຈະກຳ ຂອງໂຄງການ ກົນໄກການພັດທະນາສະອາດນັ້ນ;

- **ທາດອາຍພິດເຮືອນແກ້ວ** ໝາຍເຖິງ 6 ທາດອາຍຫລັກ ທີ່ໄດ້ລະບຸໄວ້ໃນອະນຸສັນຍາກຽວໂຕ ຄື : ກາກບອນ ໄດອອກໄຊ ($CO_2$), ມີເທນ ($CH_4$), ໄນຕຣັດອົກໄຊ ($N_2O$), ໄຮໂດຣ ຟລູໂອໂຣກາກບອນ (HFCs), ເປີຟລູໂອ ໂຣກາກບອນ (PFCs) ແລະ ຊັນເຟີ ເຮັກຊາຟລູອໍໄຣ ($SF_6$);

- **ອະນຸສັນຍາກຽວໂຕ** ໝາຍເຖິງ ອະນຸສັນຍາພາຍໃຕ້ສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ທີ່ເປັນ ເຄື່ອງມືທາງດ້ານນິຕິກຳ ກຳນົດພັນທະ ສຳລັບບັນດາປະເທດອຸດສາຫະກຳ ກໍຄື ບັນດາປະເທດພັດທະນາ ຫລຸດຜ່ອນ ການປ່ອຍອາຍພິດເຮືອນແກ້ວ ໃຫ້ໄດ້ໂດຍສະເລັ່ຍ 5,2% ໃນຊ່ວງປີ 2008-2012 ທຽບໃສ່ ລະດັບການປ່ອຍອາຍ ພິດເຮືອນແກ້ວຂອງປະເທດຕົນ ໃນປີ 1990. ອະນຸສັນຍາດັ່ງກ່າວ ໄດ້ຜ່ານການຮັບຮອງ ຢູ່ກອງປະຊຸມລັດພາຄີ ສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ຄັ້ງທີ 3 ໃນເດືອນ ທັນວາ ປີ 1997 ແລະ ໄດ້ມີຜົນບັງຄັບໃຊ້ ໃນ ວັນທີ 16 ເດືອນ ກຸມພາ ປີ 2005;

- **ໜັງສືຢັ້ງຢືນຮັບຮອງເອົາ ໂຄງການກົນໄກການພັດທະນາສະອາດ** ໝາຍເຖິງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ອອກໜັງສືຢັ້ງຢືນຮັບຮອງເອົາ ໂຄງການກົນໄກການພັດທະນາສະອາດທີ່ກຳລັງສະເໜີ ໂດຍຜູ້ ພັດທະນາໂຄງການໃດໜຶ່ງ, ຊຶ່ງເຫັນວ່າໂຄງການດັ່ງກ່າວ ສາມາດປະກອບສ່ວນໄດ້ ກັບເປົ້າໝາຍການພັດທະນາແບບຍືນ ຍົງຂອງ ສປປ ລາວ ກໍຄື ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບຂົງເຂດບູລິມະສິດທີ່ກຳນົດໄວ້ໃນແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ;

- **ເອກະສານໂຄງການ ກົນໄກການພັດທະນາສະອາດ** (CDM Project Design Document) ໝາຍເຖິງ ເອກະສານໂຄງການ ທີ່ຜູ້ພັດທະນາໂຄງການ ໄດ້ກະກຽມ ຕາມແບບຟອມທີ່ອອກລ່າສຸດ ຕາມແວັບໄຊ ຂອງສົນທິສັນ ຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ເພື່ອນຳສະເໜີໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາອອກໜັງສືຢັ້ງຢືນຮັບຮອງເອົາກ່ອນ ອົງກອນດຳເນີນງານສາກົນ ພິຈາລະນາຢັ້ງຢືນຄວາມຖືກຕ້ອງຄົບຖ້ວນ ຂອງໂຄງການ ກົນໄກການພັດທະນາສະອາດ ທີ່ກຳລັງສະເໜີນັ້ນ. ເອກະສານໂຄງການດັ່ງກ່າວ ປະກອບດ້ວຍຂໍ້ມູນ ທີ່ຊີ້

ແຈງເຖິງ: ສະພາບລວມຂອງໂຄງການ, ວິທີການກຳນົດຖານຂໍ້ມູນ, ໄລຍະເວລາລາຍຮັບສິນເຊື່ອກາກບອນ, ແຜນການ ແລະ ວິທີຕິດຕາມກວດກາໂຄງການ, ການຄິດໄລ່ການຫລຸດລົງອາຍພິດເຮືອນແກ້ວ, ສະພາບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ຄຳເຫັນຕ່າງໆ ຕໍ່ໂຄງການກົນໄກການພັດທະນາສະອາດ ທີ່ກຳລັງສະເໜີນັ້ນ;

- **ຜູ້ພັດທະນາໂຄງການ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງ ທີ່ມີຈຸດປະສົງ ຕ້ອງການ ພັດທະນາໂຄງການ ກົນໄກການພັດທະນາສະອາດ ຢູ່ ສປປ ລາວ;

- **ຕາຕະລາງ ມາດຕະຖານ ແລະ ການປະເມີນ ການພັດທະນາແບບຍືນຍົງ (Sustainable Development Criteria and Assessment Matrix)** ໝາຍເຖິງ ການກຳນົດມາດຕະຖານການພັດທະນາແບບຍືນຍົງ ສຳລັບໂຄງການກົນໄກການພັດທະນາສະອາດ ໂດຍກຳນົດເອົາ 4 ມາດຕະຖານຫລັກ ເປັນພື້ນຖານໃນການປະເມີນການພັດທະນາແບບຍືນຍົງ ຄື: ມາດຕະຖານດ້ານສິ່ງແວດລ້ອມ, ມາດຕະຖານດ້ານສັງຄົມ, ມາດຕະຖານດ້ານເສດຖະກິດ ແລະ ມາດຕະຖານດ້ານການຖ່າຍທອດເຕັກໂນໂລຊີ, ຊຶ່ງລາຍລະອຽດກ່ຽວກັບເນື້ອໃນ ຂອງຕາຕະລາງດັ່ງກ່າວ ແມ່ນມີຢູ່ໃນເອກະສານຊ້ອນທ້າຍ 2 ແລະ ຕາຕະລາງດັ່ງກ່າວມີຢູ່ນຳ ກົມຄຸ້ມຄອງໄພພິບັດແຫ່ງຊາດ ແລະ ການປ່ຽນແປງດິນຟ້າອາກາດ.

ຜູ້ພັດທະນາໂຄງການ ຕ້ອງໄດ້ນຳໃຊ້ ຕາຕະລາງມາດຕະຖານ ແລະ ການປະເມີນ ການພັດທະນາແບບຍືນຍົງ ເປັນພື້ນຖານໃນການປະເມີນ ກິດຈະກຳສຳຄັນຂອງໂຄງການ ໃນແຕ່ລະດ້ານ ພາຍໃຕ້ ແຕ່ລະມາດຕະຖານ ໂດຍນຳໃຊ້ເຄື່ອງໝາຍ + (ໝາຍເຖິງ ກິດຈະກຳນີ້ຈະສົ່ງຜົນສະທ້ອນອັນດີ), 0 (ໝາຍເຖິງ ກິດຈະກຳນີ້ຈະບໍ່ສົ່ງຜົນສະທ້ອນ), ແລະ - (ໝາຍເຖິງ ກິດຈະກຳນີ້ຈະສົ່ງຜົນສະທ້ອນຮ້າຍແຮງ) ແລະ ຖັດຈາກການວາງເຄື່ອງໝາຍ ໃສ່ແຕ່ລະກິດຈະກຳແລ້ວ ກໍໃຫ້ອະທິບາຍເຫດຜົນ ເພື່ອເປັນການຢັ້ງຢືນ ໂດຍໃຫ້ສົມທຽບໃສ່ຂໍ້ມູນພື້ນຖານ ທີ່ໄດ້ກຳນົດໄວ້ຢູ່ໃນເອກະສານໂຄງການ ກົນໄກການພັດທະນາສະອາດ;

- **ຄະນະວິຊາການປ່ຽນແປງດິນຟ້າອາກາດ** ໝາຍເຖິງ ຄະນະວິຊາການທີ່ໄດ້ຮັບການແຕ່ງຕັ້ງຂຶ້ນ ໂດຍປະກອບດ້ວຍຕາງໜ້າຫລາຍຂະແໜງການອ້ອມຂ້າງສູນກາງ ທີ່ກ່ຽວຂ້ອງຫລັກ ຊຶ່ງແມ່ນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຮັດໜ້າທີ່ເປັນປະທານຄະນະວິຊາການດັ່ງກ່າວ.

- **ສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ** ໝາຍເຖິງ ສົນທິສັນຍາສາກົນ ທີ່ໄດ້ກຳນົດ ຂອບການຮ່ວມມືລະດັບໂລກ ແນໃສ່ ເຮັດໃຫ້ຄວາມເຂັ້ມຂຸ້ນຂອງອາຍພິດເຮືອນແກ້ວ ໃນຊັ້ນບັນຍາກາດໂລກ ຢູ່ໃນລະດັບໝັ້ນຄົງ ແລະ ບໍ່ເປັນອັນຕະລາຍ. ສົນທິສັນຍາດັ່ງກ່າວ ໄດຜ່ານການຮັບຮອງ ຢູ່ກອງປະຊຸມສຸດຍອດ ຂອງອົງການສະຫະປະຊາຊາດກ່ຽວກັບການພັດທະນາ ແລະສິ່ງແວດລ້ອມ ທີ່ເມືອງ ຣີໂອເດີຈາເນໂຣ, ປະເທດ ບຣາຊິນ ໃນເດືອນ ມິຖຸນາ ປີ 1992 ແລະ ໄດ້ມີຜົນບັງຄັບໃຊ້ ໃນເດືອນ ມີນາ ປີ 1994;

- **ຢັ້ງຢືນຄວາມຖືກຕ້ອງ ຂອງໂຄງການ ກົນໄກການພັດທະນາສະອາດ ທີ່ກຳລັງສະເໜີ (Validation)** ໝາຍເຖິງ ອົງກອນດຳເນີນງານສາກົນ ໄດ້ທົບທວນຄືນ ເອກະສານໂຄງການກົນໄກການພັດທະນາສະອາດ ທີ່ສະເໜີມານັ້ນ ແລະ ພິຈາລະນາວ່າ ໂຄງການກົນໄກການພັດທະນາສະອາດທີ່ສະເໜີມານີ້ ແມ່ນໄດ້ປະຕິບັດຕາມລະບຽບຫລັກການຂອງ

ກົນໄກການພັດທະນາສະອາດ ແລ້ວຫລືຍັງ ແລະ ຖ້າເຫັນວ່າ ໄດ້ດຳເນີນການຢ່າງຖືກຕ້ອງແລ້ວ, ອົງກອນດຳເນີນງານສາກົນ ຈະໄດ້ນຳສະເໜີໃຫ້ສະພາບໍລິຫານກົນໄກການພັດທະນາສະອາດສາກົນ ລົງທະບຽນໂຄງການດັ່ງກ່າວ ຢ່າງເປັນທາງການ;

- **ຢັ້ງຢືນການຫລຸດລົງອາຍພິດເຮືອນແກ້ວ (Verification)** ໝາຍເຖິງ ອົງກອນດຳເນີນງານສາກົນ ໄດ້ຢັ້ງຢືນການຫລຸດລົງອາຍພິດເຮືອນແກ້ວ ພາຍຫລັງໄດ້ທົບທວນຄືນ ຜົນການປະຕິບັດກິດຈະກຳ ຂອງໂຄງການກົນໄກການພັດທະນາສະອາດ.

## 4. ກົນໄກການພັດທະນາສະອາດ ຢູ່ ສປປ ລາວ

### 4.1 ກົນໄກການພັດທະນາສະອາດ

ກົນໄກການພັດທະນາສະອາດ ແມ່ນກົນໄກການຮ່ວມມືທີ່ຈັດຕັ້ງຂຶ້ນ ພາຍໃຕ້ອະນຸສັນຍາກຽວໂຕ ແນໃສ່ຊ່ວຍເຫລືອບັນດາປະເທດພາຄີກຳລັງພັດທະນາ ບັນລຸການພັດທະນາແບບຍືນຍົງ ໂດຍການສົ່ງເສີມການລົງທຶນ ຈາກບັນດາປະເທດພາຄີທີ່ພັດທະນາແລ້ວ ມາຈັດຕັ້ງປະຕິບັດ ບັນດາກິດຈະກຳ ຫລື ໂຄງການຫລຸດຜ່ອນ ການປ່ອຍອາຍພິດເຮືອນແກ້ວ, ຊຶ່ງປະກອບດ້ວຍ 6 ທາດອາຍຫລັກ ທີ່ໄດ້ລະບຸໄວ້ໃນອະນຸສັນຍາກຽວໂຕ ຄື: ກາກບອນໄດອອກໄຊ ($CO_2$), ມີເທນ ($CH_4$), ໄນຕຣັດອົກໄຊ ($N_2O$), ໄຮໂດຣ ຟລູໂອໂຣກາກບອນ (HFCs), ເປີຟລູໂອໂຣກາກບອນ (PFCs) ແລະ ຊັນເຟີ ເຮັກຊາຟລູອໍໄຣ ($SF_6$);

### 4.2 ຄວາມເປັນມາ ກ່ຽວກັບ ກົນໄກການພັດທະນາສະອາດ ຢູ່ ສປປ ລາວ

ສປປ ລາວ ເປັນປະເທດໜຶ່ງ ຢູ່ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ທີ່ໄດ້ຮັບຜົນກະທົບ ແລະ ມີຂີດຈຳກັດດ້ານຄວາມອາດສາມາດຕ່ຳ ໃນການຮັບມືກັບສະພາບ ການປ່ຽນແປງດິນຟ້າອາກາດໂລກ ໂດຍສະເພາະ ການຮັບມືກັບສະພາບໄພພິບັດທຳມະຊາດ: ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ, ຊຶ່ງເປັນຜົນສະທ້ອນອັນຮ້າຍແຮງ, ໜັກໜ່ວງ ແລະ ມີໄລຍະເກີດຖີ່ຂຶ້ນຕໍ່ກັບ ສປປ ລາວ. ເຖິງແມ່ນວ່າ, ສປປ ລາວ ບໍ່ເປັນປະເທດ ທີ່ມີພັນທະໃນການຫລຸດຜ່ອນ ການປ່ອຍອາຍພິດເຮືອນແກ້ວ ອອກສູ່ຊັ້ນບັນຍາກາດໂລກ ກໍຕາມ, ສປປ ລາວ ແມ່ນຍັງໄດ້ຕັ້ງໜ້າປະກອບສ່ວນກັບ ບັນດາປະເທດອື່ນໃນໂລກ ໃນການແກ້ໄຂພາວະໂລກຮ້ອນຄື ໄດ້ໃຫ້ສັດຕະຍາບັນເຂົ້າເປັນລັດພາຄີ ຂອງສົນທິສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດ ໃນວັນທີ 4 ເມສາ 1995 ແລະ ເປັນລັດພາຄີຕໍ່ອະນຸສັນຍາກຽວໂຕ ໃນວັນທີ 6 ກຸມພາ 2003. ນອກນີ້, ສປປ ລາວ ແມ່ນຍັງໄດ້ສຳເລັດການສ້າງບົດສື່ສານແຫ່ງຊາດ ສະບັບ ທີ 1 ກ່ຽວກັບການປ່ຽນແປງດິນຟ້າອາກາດ ຂອງ ສປປ ລາວ, ຊຶ່ງສຳເລັດໃນປີ 2000 ແລະ ໄດ້ນຳສົ່ງ ກອງເລຂາສົນທິສັນຍາ ເພື່ອແລກປ່ຽນສື່ສານຜົນການສຳຫລວດອາຍພິດເຮືອນແກ້ວໃນປະເທດ ສຳລັບໃນປີ 1990 ແລະ ທາງເລືອກຂອງ ສປປ ລາວ ໃນການປະກອບສ່ວນ ວຽກງານຫລຸດຜ່ອນອາຍພິດເຮືອນແກ້ວ ແລະ ວຽກງານການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ.

ໜຶ່ງໃນທາງເລືອກ ຫລຸດຜ່ອນອາຍພິດເຮືອນແກ້ວ ຢູ່ ສປປ ລາວ ແມ່ນການຮ່ວມມື ຈັດຕັ້ງປະຕິບັດໂຄງການ ກົນໄກການພັດທະນາສະອາດ, ຊຶ່ງ ສປປ ລາວ ກໍໄດ້ຖືວ່າ ເປັນວຽກງານໜຶ່ງທີ່ສຳຄັນແລະ ມີທ່າແຮງເຊັ່ນດຽວກັນກັບ ບັນດາປະເທດພາຄີທີ່ກຳລັງພັດທະນາອື່ນ, ເປັນຕົ້ນ: ການສົ່ງເສີມໂຄງການພະລັງງານທົດແທນ, ໂຄງການປັບປຸງປະສິດ ທິພາບການນຳໃຊ້ພະລັງງານ, ໂຄງການປູກປ່າ ແລະ ຟື້ນຟູປ່າ. ສປປ ລາວ ໄດ້ລິເລີ່ມ ເຄື່ອນໄຫວ ກ່ຽວກັບ ກົນໄກການ ພັດທະນາສະອາດ ມາຕັ້ງແຕ່ປີ 2005 ແລະ ມາເຖິງປະຈຸບັນ ໄດ້ມີໂຄງການຈຳນວນໜຶ່ງ ໄດ້ຮັບການພັດທະນາ ແລະ ການສະໜັບສະໜູນຈາກລັດຖະບານ, ຊຶ່ງໃນນັ້ນ ກໍໄດ້ມີຈຳນວນໜຶ່ງ ໄດ້ຜ່ານການລົງທະບຽນ ຈາກສະພາບໍລິຫານ ກົນໄກການພັດທະນາສະອາດສາກົນ ເປັນທີ່ຮຽບຮ້ອຍແລ້ວ ແລະ ຄາດຄະເນວ່າ ໃນຕໍ່ໜ້າ ກໍຄືໃນອະນາຄົດ, ການ ປະຕິບັດກິດຈະກຳ ຂອງໂຄງການກົນໄກການພັດທະນາສະອາດ ຢູ່ ສປປ ລາວ ຈະເພີ່ມທະວີນັບມື້ນັບຫລາຍຂຶ້ນ.

### 4.3 ນະໂຍບາຍ ແລະ ອົງການຮັບຜິດຊອບ ກົນໄກການພັດທະນາສະອາດ ແຫ່ງຊາດ

#### 4.3.1 ນະໂຍບາຍ ກ່ຽວກັບ ກົນໄກການພັດທະນາສະອາດ

ລັດຖະບານ ສປປ ລາວ ນັບຕັ້ງແຕ່ໄດ້ເປັນ ລັດພາຄີ ສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ແລະ ອະນຸສັນຍາກຽວໂຕ ແມ່ນໄດ້ມີການກຳນົດເຖິງແນວທາງ ແລະ ນະໂຍບາຍອອກຕໍ່ກັບວຽກງານການປ່ຽນແປງດິນຟ້າອາ ກາດ, ຊຶ່ງໄດ້ສະແດງອອກ ໃນມະຕິກອງປະຊຸມໃຫຍ່ຂອງພັກປະຊາຊົນປະຕິວັດລາວ ແລະ ແຜນພັດທະນາເສດຖະ ກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ ແລະ ສຳລັບໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII (2011-2015) ໄດ້ກຳນົດໄວ້ຢ່າງຈະແຈ້ງ ດັ່ງນີ້: "ປະຕິບັດໜ້າທີ່ພັນທະສາກົນທີ່ ສປປ ລາວ ເປັນພາຄີ ລວມທັງການ ເຂົ້າຮ່ວມ ການແກ້ໄຂພາວະໂລກຮ້ອນ ແລະ ການປ່ຽນແປງດິນຟ້າອາກາດ".

ເຖິງແມ່ນວ່າ, ສປປ ລາວ ຍັງບໍ່ທັນມີນະໂຍບາຍແຫ່ງຊາດ ທີ່ກ່ຽວຂ້ອງໂດຍສະເພາະກັບກົນໄກການພັດທະນາ ສະອາດ ກໍຕາມ, ແຕ່ກໍຍັງໄດ້ມີຍຸດທະສາດແຫ່ງຊາດ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ທີ່ໄດ້ຖືກຮັບຮອງຈາກ ລັດຖະບານ ໃນປີ 2010. ຍຸດທະສາດດັ່ງກ່າວ ໄດ້ກຳນົດເອົາບາງມາດຕະການຫລຸດຜ່ອນການປ່ອຍອາຍພິດເຮືອນ ແກ້ວ ໂດຍສະເພາະ ຕໍ່ກັບຂະແໜງການຫລັກ, ຊຶ່ງມີສ່ວນທີ່ຕິດພັນກັບ ການກະກຽມ ແລະ ການປະຕິບັດໂຄງການ ກົນໄກການພັດທະນາສະອາດ ຢູ່ ສປປ ລາວ. ນອກນີ້, ກໍຍັງໄດ້ເຮັດການປະເມີນຄວາມຕ້ອງການເຕັກໂນໂລຊີ ຫລຸດ ຜ່ອນການປ່ອຍອາຍພິດເຮືອນແກ້ວ ແລະຄາດວ່າຜົນການປະເມີນນີ້ ຈະເປັນຂໍ້ດີໜຶ່ງທີ່ມີຄວາມສຳຄັນຕໍ່ກັບ ສປປ ລາວ ໃນການປະກອບສ່ວນ ການຫລຸດຜ່ອນອາຍພິດເຮືອນແກ້ວ ເວົ້າລວມ, ການປະຕິບັດໂຄງການ ກົນໄກການພັດທະນາ ສະອາດ ຢູ່ ສປປ ລາວ ເວົ້າສະເພາະ.

#### 4.3.2 ອົງການຮັບຜິດຊອບ ກົນໄກການພັດທະນາສະອາດ ແຫ່ງຊາດ

ພາຍຫລັງໄດ້ເຂົ້າຮ່ວມກອງປະຊຸມສຸດຍອດ ກ່ຽວກັບ ການພັດທະນາ ແລະ ສິ່ງແວດລ້ອມ ທີ່ ຣີໂອເດີເຈນີໂຣ, ປະເທດ ບຣາຊິນ ໃນປີ 1992, ລັດຖະບານ ສປປ ລາວ ກໍໄດ້ແຕ່ງຕັ້ງ ອົງການວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງ

ແວດລ້ອມ (ອວຕສ) ໃນປີ 1993, ຊຶ່ງເປັນການຈັດຕັ້ງໜຶ່ງທີ່ຮັບຜິດຊອບໂດຍກົງ ໃນວຽກງານສິ່ງແວດລ້ອມ ແລະ ໃນນີ້, ປະກອບມີ ກົມສິ່ງແວດລ້ອມ ທີ່ເປັນເສນາທິການໃຫ້ ອວຕສ ໃນການຄົ້ນຄ້ວານຳສະເໜີລັດຖະບານ ໃຫ້ສັດຕະຍາບັນ ເປັນລັດພາຄີສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ແລະ ອະນຸສັນຍາກຽວໂຕ. ພ້ອມກັນນີ້, ກົມສິ່ງແວດລ້ອມ ແມ່ນຍັງໄດ້ເຮັດໜ້າທີ່ ຕາງໜ້າ ອວຕສ ໃນຄວາມຮັບຜິດຊອບເປັນ ອົງການຮັບຜິດຊອບ ກົນໄກການພັດທະນາສະອາດ ແຫ່ງຊາດ ແລະ ເປັນຈຸດໃຈກາງປະສານງານ ຕໍ່ກອງເລຂາສົນທິສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດ ແລະ ອະນຸສັນຍາກຽວໂຕ. ຍ້ອນເຫັນໄດ້ຄວາມໝາຍ, ຄວາມສຳຄັນ ຂອງວຽກງານການປ່ຽນແປງດິນຟ້າອາກາດໃນໂລກ, ພາກພື້ນ ກໍຄື ໃນ ສປປ ລາວ, ໃນປີ 2008 ຈຶ່ງໄດ້ມີການສ້າງຕັ້ງ ຫ້ອງການ ປ່ຽນແປງດິນຟ້າອາກາດຂຶ້ນພາຍໃຕ້ກົມສິ່ງແວດລ້ອມ ໂດຍມີໜ້າທີ່ຮັບຜິດຊອບໂດຍກົງ ຕໍ່ວຽກງານ ທີ່ຕິດພັນກັບສົນທິສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດ ແລະ ອະນຸສັນຍາກຽວໂຕ ລວມທັງ ກົນໄກການພັດທະນາສະອາດ ແລະ ໃນທ້າຍປີ 2011, ລັດຖະບານ ສປປ ລາວ ໄດ້ຍົກລະດັບອົງການຈັດຕັ້ງລັດ ທີ່ຮັບຜິດຊອບວຽກງານສິ່ງແວດລ້ອມ ມາເປັນກະຊວງ ຄືເປັນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ), ພ້ອມກັນນັ້ນ ກໍຍົກລະດັບຫ້ອງການປ່ຽນແປງດິນຟ້າອາກາດ ທີ່ມີຖານະທຽບເທົ່າຂັ້ນພະແນກ ມາເປັນການຈັດຕັ້ງຂັ້ນກົມ ຄື ເປັນ ກົມຄຸ້ມຄອງໄພພິບັດແຫ່ງຊາດ ແລະ ການປ່ຽນແປງດິນຟ້າອາກາດ ທີ່ມີໜ້າທີ່ ແລະ ຄວາມຮັບຜິດຊອບ ທາງດ້ານວຽກງານການປ່ຽນແປງດິນຟ້າອາກາດ ຫລາຍຂຶ້ນກ່ວາເກົ່າ ໂດຍມີການແບ່ງງານອອກຢ່າງຈະແຈ້ງ ລະຫວ່າງວຽກງານຫລຸດຜ່ອນອາຍພິດເຮືອນແກ້ວ ແລະ ວຽກງານການປັບຕົວ ເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ, ຊຶ່ງລາຍລະອຽດ ກ່ຽວກັບ ໂຄງສ້າງກົງຈັກ ອົງການຮັບຜິດຊອບ ກົນໄກການພັດທະນາສະອາດ ແຫ່ງຊາດ ກໍຄື ໂຄງສ້າງ ກົງຈັກການຈັດຕັ້ງ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພ້ອມທັງ ກົມຄຸ້ມຄອງໄພພິບັດແຫ່ງຊາດ ແລະ ການປ່ຽນແປງດິນຟ້າອາກາດ ແມ່ນມີໃນເອກະສານຊ້ອນທ້າຍ 1.

### 4.4 ການພັດທະນາ ໂຄງການກົນໄກການພັດທະນາສະອາດ

ການພັດທະນາ ໂຄງການກົນໄກການພັດທະນາສະອາດ ຢູ່ ສປປ ລາວ ຕົ້ນຕໍ ແມ່ນມີ ສອງ ພາກສ່ວນຫລັກທີ່ກ່ຽວຂ້ອງຄື: ຜູ້ພັດທະນາໂຄງການ ແລະ ອົງການຮັບຜິດຊອບ ກົນໄກການພັດທະນາສະອາດ ແຫ່ງຊາດ, ຊຶ່ງແຕ່ລະພາກສ່ວນຈະມີຄວາມຮັບຜິດຊອບທີ່ແຕກຕ່າງກັນ ຕາມທີ່ໄດ້ຊີ້ແຈງໃນຂ້າງລຸ່ມນີ້.

1) ຜູ້ພັດທະນາໂຄງການ ປະຕິບັດ ດັ່ງນີ້:

- ເປັນຜູ້ກະກຽມ ແລະ ນຳສະເໜີ ເອກະສານໂຄງການ ກົນໄກການພັດທະນາສະອາດ ພ້ອມທັງບົດສັງລວມໂດຍຫຍໍ້ ແລະ ຕາຕະລາງມາດຕະຖານ ແລະ ການປະເມີນ ການພັດທະນາແບບຍືນຍົງ ທີ່ເປັນທັງພາສາລາວ ແລະ ອັງກິດ ຕໍ່ ອົງການຮັບຜິດຊອບ ກົນໄກການພັດທະນາສະອາດແຫ່ງຊາດ ຫລື ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ໂດຍສະເພາະ ກົມຄຸ້ມຄອງໄພພິບັດແຫ່ງຊາດ ແລະ ການປ່ຽນແປງດິນຟ້າອາກາດ ພ້ອມດ້ວຍບັນດາເອກະ

ສານຕ່າງໆທີ່ກ່ຽວຂ້ອງ, ເປັນຕົ້ນ: ບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະສັງຄົມ ທີ່ໄດ້ຜ່ານການຢັ້ງຢືນຮັບຮອງ ຈາກອົງການຈັດຕັ້ງລັດທີ່ກ່ຽວຂ້ອງ;

- ເປັນຜູ້ຕິດຕໍ່ພົວພັນໂດຍກົງ ກັບອົງກອນດຳເນີນງານສາກົນ ເພື່ອຢັ້ງຢືນຄວາມຖືກຕ້ອງ ໂຄງການກົນໄກການພັດທະນາສະອາດຂອງຕົນ ທີ່ກຳລັງສະເໜີ ແລະ ເພື່ອຢັ້ງຢືນ ການຫລຸດລົງອາຍພິດເຮືອນແກ້ວ ຈາກການປະຕິບັດບັນດາກິດຈະກຳຂອງໂຄງການ ກົນໄກການພັດທະນາສະອາດນັ້ນ ຕາມທີ່ໄດ້ລະບຸໄວ້ໃນເອກະສານໂຄງການດັ່ງກ່າວ;

- ເປັນຜູ້ຈັດຕັ້ງປະຕິບັດ ບັນດາກິດຈະກຳຂອງໂຄງການ ກົນໄກການພັດທະນາສະອາດ ທີ່ໄດ້ຜ່ານການລົງທະບຽນ ຈາກສະພາບໍລິຫານ ກົນໄກການພັດທະນາສະອາດສາກົນ ພາຍໃຕ້ອະນຸສັນຍາກຽວໂຕ;

- ເປັນຜູ້ກະກຽມ ແລະ ປະຕິບັດ ແຜນການຕິດຕາມກວດກາໂຄງການ ກົນໄກການພັດທະນາສະອາດ ພ້ອມທັງລາຍງານໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ໂດຍສະເພາະ ກົມຄຸ້ມຄອງໄພພິບັດແຫ່ງຊາດ ແລະ ການປ່ຽນແປງດິນຟ້າອາກາດ ເປັນແຕ່ລະໄລຍະ ກ່ຽວກັບ ຄວາມຄືບໜ້າຂອງໂຄງການ;

- ໃຊ້ຈ່າຍເຂົ້າໃນການເຄື່ອນໄຫວ ກິດຈະກຳທີ່ກ່ຽວຂ້ອງກັບການກະກຽມ ແລະ ການປະຕິບັດ ໂຄງການກົນໄກການພັດທະນາສະອາດນັ້ນ ລວມທັງ ວຽກງານຂະບວນການພິຈາລະນາຮັບຮອງ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕໍ່ໂຄງການດັ່ງກ່າວ ແລະ ການໃຊ້ຈ່າຍສຳລັບ ຄ່າທຳນຽມ, ຄ່າບໍລິການ ຊຶ່ງຈະໄດ້ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດ.

2) ອົງການຮັບຜິດຊອບ ກົນໄກການພັດທະນາສະອາດ ແຫ່ງຊາດ ຫລື ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນນາມຕາງໜ້າລັດຖະບານ ສປປ ລາວ ປະຕິບັດ ດັ່ງນີ້ :

- ເປັນຜູ້ທົບທວນຄືນ ເອກະສານໂຄງການກົນໄກ ການພັດທະນາສະອາດ ຢູ່ ສປປ ລາວ ໂດຍແມ່ນ ກົມຄຸ້ມຄອງໄພພິບັດແຫ່ງຊາດ ແລະ ການປ່ຽນແປງດິນຟ້າອາກາດ ຈະເປັນໃຈກາງປະສານສົມທົບປຶກສາຫາລື ກັບ ຫລາຍພາກສ່ວນກ່ຽວ ຂ້ອງ ໂດຍສະເພາະ ຄະນະວິຊາການປ່ຽນແປງດິນຟ້າອາກາດ;

- ອອກໜັງສືຢັ້ງຢືນຮັບຮອງເອົາ ຫລື ປະຕິເສດ ໂຄງການກົນໄກ ການພັດທະນາສະອາດ ຢູ່ ສປປ ລາວ ບົນພື້ນຖານການພິຈາລະນາການປະກອບຄຳເຫັນ ຂອງຄະນະວິຊາການປ່ຽນແປງດິນຟ້າອາກາດ;

- ເປັນຜູ້ຄຸ້ມຄອງ ການຈັດຕັ້ງປະຕິບັດ ບັນດາກິດຈະກຳ ຂອງໂຄງການ ກົນໄກການພັດທະນາສະອາດ ຢູ່ ສປປ ລາວ ພ້ອມທັງ ຄຸ້ມຄອງຂໍ້ມູນຂ່າວສານຕ່າງໆທີ່ກ່ຽວຂ້ອງ.

### 4.5 ການພິຈາລະນາ ໂຄງການ ກົນໄກການພັດທະນາສະອາດ

ການພິຈາລະນາ ໂຄງການກົນໄກການພັດທະນາສະອາດ ຢູ່ ສປປ ລາວ ແມ່ນຈະໄດ້ປະຕິບັດ ໄປຕາມຂັ້ນຕອນສຳຄັນ ດັ່ງນີ້:

1) ຜູ້ພັດທະນາໂຄງການ ຈະຕ້ອງໄດ້ກະກຽມ ເອກະສານສຳຄັນ ຄື: ເອກະສານໂຄງການ ກົນໄກການພັດທະນາສະອາດ ພ້ອມທັງ ບົດສັງລວມໂດຍຫຍໍ້, ຕາຕະລາງມາດຕະຖານ ແລະ ການປະເມີນ ການພັດທະນາແບບຍືນຍົງ ທີ່ເປັນທັງພາສາ ລາວ ແລະ ອັງກິດ.

ໃນຊ່ວງໄລຍະເວລາ ການກະກຽມບັນດາເອກະສານເຫລົ່ານີ້, ຜູ້ພັດທະນາໂຄງການ ຈະຕ້ອງໄດ້ດຳເນີນການປຶກສາຫາລືກັບຫລາຍພາກສ່ວນ ທີ່ມີສ່ວນກ່ຽວຂ້ອງກັບໂຄງການ.

2) ຜູ້ພັດທະນາໂຄງການ ຈະຕ້ອງສະເໜີ ເອກະສານ ໂຄງການ ກົນໄກການພັດທະນາສະອາດ ພ້ອມທັງ ບົດສັງລວມໂດຍຫຍໍ້, ຕາຕະລາງມາດຕະຖານ ແລະ ການປະເມີນ ການພັດທະນາແບບຍືນຍົງ ທີ່ເປັນທັງພາສາ ລາວ ແລະ ອັງກິດ ຈຳນວນ 1 ຊຸດ ໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ໂດຍສະເພາະ ກົມຄຸ້ມຄອງໄພພິບັດແຫ່ງຊາດ ແລະ ການປ່ຽນແປງດິນຟ້າອາກາດ ເພື່ອພິຈາລະນາ. ໃນຂະໜະດຽວກັນ, ຜູ້ພັດທະນາໂຄງການຈະຕ້ອງໄດ້ສະເໜີເອກະສານອື່ນທີ່ກ່ຽວຂ້ອງເຊັ່ນດຽວກັນ ອີກ ຈຳນວນ 1 ຊຸດ, ເປັນຕົ້ນ: ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ພ້ອມທັງ ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ທີ່ໄດ້ຜ່ານການພິຈາລະນາ ຫລື ຢັ້ງຢືນຮັບຮອງຈາກຂະແໜງການລັດທີ່ກ່ຽວຂ້ອງ ແລະ ເອກະສານອື່ນທີ່ກ່ຽວຂ້ອງ ຖ້າມີ.

3. ພາຍຫລັງໄດ້ຮັບເອກະສານຈາກຜູ້ພັດທະນາໂຄງການ ກົມຄຸ້ມຄອງໄພພິບັດແຫ່ງຊາດ ແລະ ການປ່ຽນແປງດິນຟ້າອາກາດ ຈະຕ້ອງໄດ້ກວດກາ ຄວາມຖືກຕ້ອງ ແລະ ຄົບຖ້ວນໃຫ້ສຳເລັດ ພາຍໃນ 5 ວັນລັດຖະການ ແລະ ໃຫ້ແຈ້ງບອກຜູ້ພັດທະນາໂຄງການ ໃນກໍລະນີ ມີຄວາມຕ້ອງການເອກະສານກ່ຽວຂ້ອງເພີ່ມເຕີມ. ຖ້າຫາກເຫັນວ່າເອກະສານມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ, ກົມຄຸ້ມຄອງໄພພິບັດແຫ່ງຊາດ ແລະ ການປ່ຽນແປງດິນຟ້າອາກາດຈະສະເໜີໃຫ້ຜູ້ພັດທະນາໂຄງການ ນຳສົ່ງບັນດາເອກະສານເຫລົ່ານັ້ນ ເພີ່ມເຕີມອີກ 14 ຊຸດ.

4) ກົມຄຸ້ມຄອງໄພພິບັດແຫ່ງຊາດ ແລະ ການປ່ຽນແປງດິນຟ້າອາກາດ ຈະໄດ້ດຳເນີນການໃຫ້ສຳເລັດ ພາຍໃນ 5 ວັນລັດຖະການ ພາຍຫລັງໄດ້ຮັບເອກະສານ ທີ່ຖືກຕ້ອງ ແລະ ຄົບຖ້ວນ ຈາກຜູ້ພັດທະນາໂຄງການ ໃນການນຳສົ່ງໃຫ້ບັນດາສະມາຊິກຂອງຄະນະວິຊາການປ່ຽນແປງດິນຟ້າອາກາດ ເພື່ອພິຈາລະນາປະກອບຄຳເຫັນ.

ກົມຄຸ້ມຄອງໄພພິບັດແຫ່ງຊາດ ແລະ ການປ່ຽນແປງດິນຟ້າອາກາດ ໃນກໍລະນີຫາກມີຄວາມຈຳເປັນ ແມ່ນຈະໄດ້ມີການປຶກສາຫາລືເພີ່ມເຕີມ ກັບກອງປະເມີນຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກ່ຽວກັບ ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການ.

5) ບັນດາສະມາຊິກ ຂອງຄະນະວິຊາການປ່ຽນແປງດິນຟ້າອາກາດ ແມ່ນຈະໄດ້ສຳເລັດ ການປະກອບຄຳເຫັນໃສ່ເອກະສານໂຄງການ ກົນໄກການພັດທະນາສະອາດ ພາຍໃນ 25 ວັນລັດຖະການ ແລ້ວສົ່ງກັບຄືນ ໃຫ້ກົມຄຸ້ມຄອງໄພພິບັດແຫ່ງຊາດ ແລະ ການປ່ຽນແປງດິນຟ້າອາກາດ.

6) ຫລັງຈາກໄດ້ມີການປຶກສາຫາລືກັບ ຄະນະວິຊາການປ່ຽນແປງດິນຟ້າອາກາດ ແລະ ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມແລ້ວ, ກົມຄຸ້ມຄອງໄພພິບັດແຫ່ງຊາດ ແລະ ການປ່ຽນແປງດິນຟ້າອາກາດ ອາດຈະສະ

ເໜີໃຫ້ຜູ້ພັດທະນາໂຄງການ ໄດ້ຈັດຕັ້ງ ແລະ ດຳເນີນ ກອງປະຊຸມປຶກສາຫາລືກັບພາກສ່ວນອື່ນທີ່ກ່ຽວຂ້ອງ ເພີ່ມເຕີມ ຕາມຄວາມເໝາະສົມ.

7) ກົມຄຸ້ມຄອງໄພພິບັດແຫ່ງຊາດ ແລະ ການປ່ຽນແປງດິນຟ້າອາກາດ ຈະໄດ້ແຈ້ງບອກໃຫ້ຜູ້ພັດທະນາໂຄງການຮັບຊາບຢ່າງເປັນລາຍລັກອັກສອນ ໃນກໍລະນີ ຕ້ອງການໃຫ້ມີການປັບປຸງເນື້ອໃນເອກະສານ ຫລື ຕ້ອງການຄວາມກະຈ່າງແຈ້ງເພີ່ມເຕີມໃນບາງບັນຫາ.

ຜູ້ພັດທະນາໂຄງການ ຈະຕ້ອງໄດ້ເອົາໃຈໃສ່ພິຈາລະນາ ແລະ ປັບປຸງແກ້ໄຂເປັນຢ່າງດີຕາມຄຳເຫັນ ຫລື ຄຳແນະນຳຕ່າງໆຂອງ ກົມຄຸ້ມຄອງໄພພິບັດແຫ່ງຊາດ ແລະ ການປ່ຽນແປງດິນຟ້າອາກາດ ແລ້ວນຳສະເໜີຄືນໃໝ່ ເພື່ອພິຈາລະນາຂັ້ນສຸດທ້າຍ.

8) ກົມຄຸ້ມຄອງໄພພິບັດແຫ່ງຊາດ ແລະ ການປ່ຽນແປງດິນຟ້າອາກາດ ຈະໄດ້ສັງລວມບັນດາຄຳເຫັນຕ່າງໆ ທີ່ໄດ້ຈາກບັນດາສະມາຊິກ ຂອງຄະນະວິຊາການປ່ຽນແປງດິນຟ້າອາກາດ, ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ຈາກກອງປະຊຸມປຶກສາຫາລືກັບພາກສ່ວນອື່ນທີ່ກ່ຽວຂ້ອງໃນສັງຄົມ ລວມທັງ ຂໍ້ມູນຕ່າງໆທີ່ສະໜອງເພີ່ມເຕີມຈາກຜູ້ພັດທະນາໂຄງການ ແລະ ຫລັງຈາກນັ້ນ ຈຶ່ງເຮັດໜັງສືລາຍງານກ່ຽວກັບໂຄງການກົນໄກການພັດທະນາສະອາດທີ່ສະເໜີນັ້ນ ໃຫ້ ລັດຖະມົນຕີ ວ່າການ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາ;

9) ພາຍຫລັງ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ຕົກລົງຮັບຮອງເອົາໂຄງການນັ້ນແລ້ວ ຜູ້ພັດທະນາໂຄງການ ແມ່ນຈະໄດ້ຮັບໜັງສືຢັ້ງຢືນຮັບຮອງເອົາ ໂຄງການ ກົນໄກການພັດທະນສະອາດນັ້ນ ແລະ ໃນກໍລະນີ ໂຄງການຫາກຖືກປະຕິເສດ, ທາງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈະໄດ້ແຈ້ງບອກເປັນລາຍລັກອັກສອນ ຕໍ່ຜູ້ພັດທະນາໂຄງການ ໃຫ້ຊາບກ່ຽວກັບເຫດຜົນ.

**ເອກະສານຊ້ອນທ້າຍ 1**

ໂຄງສ້າງ ກົງຈັກ ອົງການຈັດຕັ້ງຮັບຜິດຊອບກົນໄກການພັດທະນາສະອາດ ແຫ່ງຊາດ




**ໝາຍເຫດ:**

1- ຫ້ອງການ
2- ກົມຈັດຕັ້ງ ແລະ ພະນັກງານ
3- ກົມກວດກາ
4- ກົມແຜນການ ແລະ ການຮ່ວມມື
5- ກົມຈັດສັນ ແລະ ພັດທະນາທີ່ດິນ
6- ກົມຄຸ້ມຄອງທີ່ດິນ
7- ກົມຊັບພະຍາກອນນ້ຳ
8- ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ
9- ກົມຄວບຄຸມມົນລະພິດ
10- ກົມຄຸ້ມຄອງຊັບພະຍາກອນປ່າໄມ້
11- ກົມທໍລະນີສາດ ແລະ ແຮ່ທາດ
12- ກົມອຸຕຸນິຍົມ ແລະ ອຸທົກກະສາດ
13- ກົມຄຸ້ມຄອງໄພພິບັດແຫ່ງຊາດ ແລະ ການປ່ຽນແປງດິນຟ້າອາກາດ
14- ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ
15- ສະຖາບັນຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
16- ກອງເລຂາ ຄະນະກຳມະການແມ່ນ້ຳຂອງແຫ່ງຊາດລາວ
17- ສູນຂໍ້ມູນ-ຂ່າວສານ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

**ເອກະສານຊ້ອນທ້າຍ 2**

## ຕາຕະລາງການປະເມີນການພັດທະນາແບບຍືນຍົງສຳລັບໂຄງການກົນໄກການພັດທະນາສະອາດ ຢູ່ ສປປ ລາວ

| ລຳດັບ | ມາດຕະຖານ | | ການປະເມີນ (ໂດຍຄ່າ: +, 0, -) | ອະທິບາຍ ເຫດຜົນ |
|---|---|---|---|---|
| 1 | ດ້ານສິ່ງແວດລ້ອມ | | | |
| 1.1 | ການປະກອບສ່ວນຫຼຸດຜ່ອນ ການປ່ຽນແປງດິນຟ້າອາກາດ ຂອງໂລກ | + | ມີການຫຼຸດຜ່ອນ ຫຼື ຫຼີກລ້ຽງການປ່ອຍອາຍພິດເຮືອນແກ້ວ ສົມທຽບໃສ່ກັບສະພາບຂໍ້ມູນເບື້ອງຕົ້ນ ທີ່ໄດ້ກຳນົດໄວ້ຢູ່ໃນ ເອກະສານໂຄງການກົນໄກການພັດທະນາສະອາດ<br>................................................................... | |
| | | 0 | ບໍ່ມີການປ່ອຍອາຍພິດເຮືອນແກ້ວເພີ່ມຂຶ້ນສົມທຽບໃສ່ກັບ ສະພາບຂໍ້ມູນເບື້ອງຕົ້ນ ທີ່ໄດ້ກຳນົດໄວ້ຢູ່ໃນ ເອກະສານໂຄງການກົນໄກການພັດທະນາສະອາດ<br>................................................................... | |
| | | - | ມີການເພີ່ມຂຶ້ນໃນການປ່ອຍອາຍພິດເຮືອນແກ້ວສົມທຽບ ໃສ່ກັບສະພາບຂໍ້ມູນເບື້ອງຕົ້ນ ທີ່ໄດ້ກຳນົດໄວ້ຢູ່ໃນ ເອກະສານໂຄງການກົນໄກການພັດທະນາສະອາດ | |
| 1.2 | ການຫຼຸດຜ່ອນການປ່ອຍມົນລະພິດທາງອາກາດ (ການປ່ອຍມົນລະພິດຕ່າງໆ ນອກຈາກອາຍພິດເຮືອນແກ້ວ, ໂດຍສົມທຽບໃສ່ສະພາບຂໍ້ມູນເບື້ອງຕົ້ນຂອງໂຄງການທີ່ກຳນົດຢູ່ໃນເອກະສານໂຄງການກົນໄກການພັດທະນາສະອາດ (ຕົວຢ່າງ: $PM_{10}$, Nox, $SO_2$) | + | ມີການຫຼຸດຜ່ອນມົນລະພິດທາງອາກາດ ສົມທຽບໃສ່ກັບສະພາບຂໍ້ມູນເບື້ອງຕົ້ນ ທີ່ໄດ້ກຳນົດໄວ້ຢູ່ໃນ ເອກະສານໂຄງການກົນໄກການພັດທະນາສະອາດ<br>......................................................................... | |
| | | 0 | ບໍ່ມີການປ່ອຍມົນລະພິດທາງອາກາດເພີ່ມຂຶ້ນ ຖ້າສົມທຽບໃສ່ກັບສະພາບຂໍ້ມູນເບື້ອງຕົ້ນທີ່ກຳນົດຢູ່ໃນເອກະສານໂຄງການກົນໄກການພັດທະນາສະອາດ<br>......................................................................... | |
| | | - | ມີການເພີ່ມຂຶ້ນຂອງມົນລະພິດທາງອາກາດ ຖ້າສົມທຽບໃສ່ສະພາບຂໍ້ມູນເບື້ອງຕົ້ນທີ່ກຳນົດຢູ່ໃນເອກະສານໂຄງການ | |

| | | | | |
|---|---|---|---|---|
| | | | ກົນໄກການພັດທະນາສະອາດ | |
| 1.3 | ການຫຼຸດຜ່ອນມົນລະພິດທາງນໍ້າ ສົມທຽບໃສ່ສະພາບຂໍ້ມູນເບື້ອງຕົ້ນ ຕາມທີ່ໄດ້ກຳນົດໄວ້ຢູ່ໃນເອກະສານໂຄງການກົນໄກການພັດທະນາສະອາດ | + | ມີການຫຼຸດຜ່ອນມົນລະພິດທາງນໍ້າ ສົມທຽບໃສ່ສະພາບຂໍ້ມູນເບື້ອງຕົ້ນຂອງໂຄງການ ທີ່ໄດ້ກຳນົດໄວ້ຢູ່ໃນເອກະສານໂຄງການກົນໄກການພັດທະນາສະອາດ<br>............................................................ | |
| | | 0 | ບໍ່ມີການເພີ່ມຂຶ້ນ ຂອງມົນລະພິດທາງນໍ້າ ຖ້າສົມທຽບໃສ່ກັບສະພາບຂໍ້ມູນເບື້ອງຕົ້ນ ທີ່ກຳນົດຢູ່ໃນເອກະສານໂຄງການກົນໄກການພັດທະນາສະອາດ .<br>.............................................................. | |
| | | - | ມີການເພີ່ມຂຶ້ນຂອງມົນລະພິດທາງນໍ້າ ຖ້າສົມທຽບໃສ່ສະພາບຂໍ້ມູນເບື້ອງຕົ້ນ ທີ່ກຳນົດຢູ່ໃນເອກະສານໂຄງການ ກົນໄກການພັດທະນາສະອາດ | |
| 1.4 | ການຫຼຸດຜ່ອນມົນລະພິດທາງດິນຖ້າສົມທຽບໃສ່ສະພາບຂໍ້ມູນເບື້ອງຕົ້ນຂອງໂຄງການ ຕາມທີ່ໄດ້ກຳນົດໄວ້ ຢູ່ໃນເອກະສານໂຄງການກົນໄກການພັດທະນາສະອາດ | + | ມີການຫຼຸດຜ່ອນມົນລະພິດທາງດິນ ຖ້າສົມທຽບໃສ່ກັບ ສະພາບຂໍ້ມູນເບື້ອງຕົ້ນ ທີ່ໄດ້ກຳນົດໄວ້ຢູ່ໃນເອກະສານໂຄງການກົນໄກການພັດທະນາສະອາດ .<br>.............................................................. | |
| | | 0 | ບໍ່ມີການເພີ່ມຂຶ້ນຂອງມົນລະພິດທາງດິນ ຖ້າສົມທຽບໃສ່ກັບສະພາບຂໍ້ມູນເບື້ອງຕົ້ນໂຄງການທີ່ກຳນົດຢູ່ໃນເອກະສານໂຄງການ ກົນໄກການພັດທະນາສະອາດ .<br>.............................................................. | |
| | | - | ມີການເພີ່ມຂຶ້ນຂອງມົນລະພິດທາງດິນ ຖ້າສົມທຽບໃສ່ສະພາບຂໍ້ມູນເບື້ອງຕົ້ນ ໂຄງການທີ່ກຳນົດ ຢູ່ໃນເອກະສານໂຄງການ ກົນໄກການພັດທະນາສະອາດ | |
| 1.5 | ການນຳໃຊ້ຊັບພະຍາກອນດິນແບບຍືນຍົງ | + | ມີການປັບປຸງຊັບພະຍາກອນດິນ<br>.............................................................. | |
| | | 0 | ບໍ່ມີຜົນກະທົບທີ່ຮ້າຍແຮງ ຕໍ່ຊັບພະຍາກອນດິນ<br>.............................................................. | |
| | | - | ບໍ່ມີຄວາມຍືນຍົງ ໃນການນຳໃຊ້ດິນ ຫຼື ເປັນການເຊື່ອມໂຊມຂອງດິນ | |

| | | | | |
|---|---|---|---|---|
| 1.6 | ການອະນຸລັກຊີວະນາໆພັນ ແລະການປ້ອງກັນແນວພັນທີ່ໃກ້ຈະສູນພັນ | + | ມີການເພີ່ມຂຶ້ນຂອງຊັບພະຍາກອນທາງດ້ານຊີວະນາໆພັນ ແລະ ພັນດັ້ງເດີມຂອງລະບົບນິເວດ, ແນວພັນ ຫຼື ພັນທຸກຳ, ຕົວຢ່າງ:<br>• ການຂະຫຍາຍເນື້ອທີ່ຢູ່ອາໃສ ໃຫ້ແກ່ຊະນິດພັນທີ່ໃກ້ຈະສູນພັນ.<br>• ເປັນການເພີ່ມວຽກງານ ກ່ຽວກັບ ການສົ່ງເສີມແນວພັນທ້ອງຖິ່ນ.<br>............................................................... | |
| | | 0 | ບໍ່ມີຜົນກະທົບທີ່ຮ້າຍແຮງຕໍ່ຊັບພະຍາກອນຂອງຊີວະນາໆພັນ ແລະ ພັນດັ້ງເດີມໃນລະບົບນິເວດ, ແນວພັນ ຫຼື ພັນທຸກຳ. ຕົວຢ່າງ:<br>• ສ້າງເງື່ອນໄຂໃຫ້ສັດສາຍພັນຊະນິດໃດໜຶ່ງສາມາດເຄື່ອນຍ້າຍຈາກເຂດໜຶ່ງໄປອີກເຂດໜຶ່ງ ໂດຍບໍ່ມີສິ່ງລົບກວນ.<br>• ການຄຸ້ມຄອງ ຫຼື ການຈັດຕັ້ງປະຕິບັດແຜນງານເພື່ອ ປົກປັກຮັກສາຊະນິດພັນ ແລະ ທີ່ຢູ່ອາໄສຂອງພວກມັນ.<br>............................................................... | |
| | | - | ມີການຫຼຸດລົງຂອງຊັບພະຍາກອນຊີວະນາໆພັນ ແລະ ພັນດັ້ງເດີມຢູ່ໃນລະບົບນິເວດ, ສາຍພັນ ຫຼື ພັນທຸກຳ, ຕົວຢ່າງ:<br>• ການອະນາໄມພື້ນທີ່ ຫຼື ເກີດມີນ້ຳຖ້ວມທີ່ຢູ່ອາໃສໃນລະບົບນິເວດ.<br>• ການຍົກຍ້າຍ ຫຼື ສິ່ງຜົນກະທົບຕໍ່ແນວພັນທີ່ໃກ້ຈະສູນພັນ ແລະ ທີ່ຢູ່ອາໃສຂອງພວກມັນ.<br>• ການຍົກຍ້າຍແນວພັນທີ່ມີຄວາມຫຼາກຫຼາຍ ທາງດ້ານສາຍພັນເພື່ອປູກແນວພັນຊະນິດດ່ຽວແທນສາຍພັນຄູ່. | |
| 1.7 | ການນຳໃຊ້ຊັບພະຍາກອນແຮ່ທາດ ທີ່ສົມເຫດສົມຜົນ | 0 | ມີການນຳໃຊ້ຊັບພະຍາກອນແຮ່ທາດ ຢ່າງມີເຫດຜົນ<br>............................................................... | |
| | | - | ການນຳໃຊ້ຊັບພະຍາກອນແຮ່ທາດຢ່າງບໍ່ມີປະສິດທິຜົນ. | |
| 1.8 | ການນຳໃຊ້ຊັບພະຍາກອນປ່າ | + | ມີການປັບປຸງຊັບພະຍາກອນປ່າໄມ້. | |

| | | | | |
|---|---|---|---|---|
| | ໄມ້ແບບຍືນຍົງ | 0 | ..............................................................<br>• ບໍ່ມີຜົນກະທົບທີ່ຮ້າຍແຮງຕໍ່ຊັບພະຍາກອນປ່າໄມ້.<br>• ແຜນງານໃນຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານ ເພື່ອຫຼຸດຜ່ອນຜົນກະທົບ.<br>.............................................................. | |
| | | - | ມີການນຳໃຊ້ແບບບໍ່ຍືນຍົງ ຫຼື ການນຳໃຊ້ຊັບພະຍາກອນປ່າໄມ້ໃຫ້ໝົດໄປ. | |
| 1.9 | ການນຳໃຊ້ຊັບພະຍາກອນນໍ້າແບບຍືນຍົງ | + | ມີການປັບປຸງຊັບພະຍາກອນນໍ້າ.<br>.............................................................. | |
| | | 0 | • ບໍ່ມີຜົນກະທົບທີ່ຮ້າຍແຮງຕໍ່ຊັບພະຍາກອນນໍ້າ.<br>• ແຜນການຄຸ້ມຄອງ ຫຼື ແຜນການຈັດຕັ້ງປະຕິບັດ ເພື່ອການຫຼຸດຜ່ອນຜົນກະທົບ<br>.............................................................. | |
| | | - | ມີການນຳໃຊ້ແບບບໍ່ຍືນຍົງ ຫຼື ການນຳ ໃຊ້ຊັບພະຍາກອນນໍ້າໃຫ້ໝົດໄປ | |
| 1.10 | ການປົກປັກຮັກສາສິນລະປະກຳ, ສະຖານທີ່ທາງດ້ານວັດທະນະທຳ, ປະຫວັດສາດ ຫຼື ຄວາມເຊື່ອຖື. | + | ມີການຂະຫຍາຍການອະນຸລັກສິລະປະກຳ, ວັດທະນະທຳ, ຮີດຄອງປະເພນີ, ສະຖານທີ່ທາງດ້ານປະຫວັດສາດ ຫຼື ຄວາມເຊື່ອຖື.<br>.............................................................. | |
| | | 0 | ບໍ່ມີຜົນກະທົບທາງລົບຕໍ່ສະຖານທີ່ທາງດ້ານສິນລະປະກຳ, ວັດທະນະທຳ, ປະຫວັດສາດ ຫຼື ຄວາມເຊື່ອຖື.<br>.............................................................. | |
| | | - | • ມີຜົນກະທົບດ້ານລົບ ຕໍ່ປະຊາຊົນໃນການເຂົ້າໄປຫາສະຖານທີ່ທາງດ້ານສິນລະປະກຳ, ວັດທະນະທຳ, ປະຫວັດສາດ ຫຼື ຄວາມເຊື່ອຖື.<br>• ມີຜົນກະທົບດ້ານລົບ ຕໍ່ຄວາມສາມາດຂອງປະຊາຊົນໃນການເຂົ້າໄປຫາສະຖານທີ່ທາງດ້ານສິລະປະກຳ, ວັດທະນະທຳ, ປະຫວັດສາດ ຫຼື ຄວາມເຊື່ອຖື. | |

| | | | | |
|---|---|---|---|---|
| 2. | ດ້ານສັງຄົມ | | | |
| 2.1 | ເປັນການປະກອບສ່ວນຢ່າງແທ້ຈິງຕໍ່ການລຶບລ້າງຄວາມທຸກຍາກ (ຢູ່ໃນເຂດຈັດຕັ້ງປະຕິບັດໂຄງການ) | +<br><br>0<br><br>- | • ໄດ້ເພີ່ມໂອກາດໃນການສ້າງລາຍຮັບ ໃຫ້ແກ່ປະຊາຊົນທ້ອງຖິ່ນ.<br>• ໄດ້ປັບປຸງຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນ ໂດຍສະເພາະປະຊາຊົນຜູ້ທຸກຍາກ ແລະ ກຸ່ມຄົນທີ່ບໍ່ມີໂອກາດ.<br>..............................................................<br>ບໍ່ມີຜົນກະທົບຕໍ່ຊີວິດການເປັນຢູ່ ຂອງປະຊາຊົນທ້ອງຖິ່ນ.<br>..............................................................<br>• ເຮັດໃຫ້ປະຊາຊົນທ້ອງຖິ່ນ ບໍ່ມີຄວາມສາມາດ ໃນການເຂົ້າໄປຫາຊັບພະຍາກອນ ເພື່ອສ້າງລາຍຮັບ.<br>• ການຍົກຍ້າຍປະຊາຊົນ ໂດຍບໍ່ມີຫຼາຍທາງເລືອກ ໃນການສ້າງລາຍຮັບ. | |
| 2.2 | ການປະກອບສ່ວນໃຫ້ແກ່ຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ແລະ ຄວາມເປັນທຳໃນສັງຄົມ | +<br><br>0<br><br>- | ມີການສົ່ງເສີມຄວາມສະເໝີພາບລະຫວ່າງ ຍິງ-ຊາຍ, ໃຫ້ສິດອຳນາດແກ່ແມ່ຍິງ ແລະ ໃຫ້ພວກເຂົາເຈົ້າເປັນສ່ວນໜຶ່ງຂອງສັງຄົມ.<br>..............................................................<br>ບໍ່ມີການປ່ຽນແປງ ຄວາມສະເໝີພາບ ລະຫວ່າງຍິງ-ຊາຍ, ການໃຫ້ສິດອຳນາດ ແລະ ການເຂົ້າຮ່ວມຂອງແມ່ຍິງໃນສັງຄົມ.<br>..............................................................<br>ມີການຫຼຸດລົງຄວາມສະເໝີພາບລະຫວ່າງ ຍິງ-ຊາຍ, ການຈຳແນກຕໍ່ແມ່ຍິງ ແລະ ຫຼຸດການໃຫ້ໂອກາດພວກເຂົາເຈົ້າໃນການເຂົ້າຮ່ວມວຽກງານດ້ານສັງຄົມ. | |
| 2.3 | ການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ (ປະຊາຊົນທີ່ໄດ້ຮັບຜົນກະທົບໂດຍກົງ ຈາກໂຄງການທີ່ສະເໜີມາ). | + | • ມີການປຶກສາຫາລື ກັບພາກສ່ວນທີ່ກ່ຽວຂ້ອງ ຕັ້ງແຕ່ໄລຍະເລີ່ມຕົ້ນໂຄງການ.<br>• ໂຄງການໄດ້ອອກແບບ ໂດຍມີສ່ວນຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ.<br>• ມີພາກສ່ວນທີ່ກ່ຽວຂ້ອງຢູ່ໃນລະດັບທ້ອງຖິ່ນ ສະໜັບສະໜູນໂຄງການ.<br>• ມີສ່ວນຮ່ວມ ຂອງພາກສ່ວນທີ່ກ່ຽວຂ້ອງ ຢູ່ໃນຂະບວນ | |

| | | | | |
|---|---|---|---|---|
| | | 0 | ການຕັດສິນບັນຫາ.<br>..............................................................<br>ພາກສ່ວນທີ່ກ່ຽວຂ້ອງ ໄດ້ເຂົ້າຮ່ວມປຶກສາຫາລື ແລະ ໄດ້ມີການກຳນົດວິທີການຫຼຸດຜ່ອນຜົນກະທົບ.<br>.............................................................. | |
| | | - | • ບໍ່ມີການປຶກສາຫາລື ກັບພາກສ່ວນທີ່ກ່ຽວຂ້ອງ.<br>• ບໍ່ນຳເອົາຄຳເຫັນຂອງພວກເຂົາເຈົ້າມາພິຈາລະນາ<br>• ປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ພຽງແຕ່ໃນໄລຍະສຸດທ້າຍຂອງໂຄງການ ແລະ ບໍ່ມີໂອກາດ ໃນການປ່ຽນແປງໂຄງການ.<br>• ພາກສ່ວນທີ່ກ່ຽວຂ້ອງຢູ່ໃນລະດັບທ້ອງຖິ່ນ ບໍ່ສະໜັບສະໜູນໂຄງການ ຫຼື ຄັດຄ້ານໂຄງການ | |
| 2.4 | ທຸກກຸ່ມ, ຍິງ ແລະ ຊາຍ ມີຄວາມສະເໝີພາບໃນການເຂົ້າໄປຫາ ແລະຄຸ້ມຄອງຜົນປະໂຫຍດຂອງຊຸມຊົນທີ່ເປັນເປົ້າໝາຍຂອງໂຄງການ. | + | ໃຫ້ການສະໜັບສະໜູນແກ່ກຸ່ມຄົນທີ່ດ້ອຍໂອກາດ ທີ່ສຸດຂອງຊຸມຊົນທີ່ເປັນເປົ້າໝາຍ ເພື່ອໃຫ້ພວກເຂົາເຈົ້າໄດ້ຮັບຜົນປະໂຫຍດຈາກໂຄງການ.<br>.............................................................. | |
| | | 0 | ມີຄວາມສະເໝີພາບ ໃນການເຂົ້າໄປຫາຜົນປະໂຫຍດ ຂອງຊຸມຊົນ ທີ່ໄດ້ຈາກໂຄງການສຳລັບຊຸມຊົນທີ່ເປັນເປົ້າໝາຍ.<br>.............................................................. | |
| | | - | ຄວາມບໍ່ເປັນທຳ ໃນການເຂົ້າໄປຫາ ຜົນປະໂຫຍດ ຂອງຊຸມຊົນທີ່ເປັນເປົ້າໝາຍ. | |
| 2.5 | ການສ້າງວຽກເຮັດງານທຳ ຢູ່ປະເທດ (ໄລຍະສັ້ນ ແລະ ໄລຍະຍາວ) ແລະຈະມີການແກ້ໄຂການຫຼຸດລົງຂອງວຽກເຮັດງານທຳ-ການເສຍວຽກເຮັດງານທຳ ຕ້ອງໄດ້ຮັບການຊົດເຊີຍ ຢ່າງເໝາະສົມ ຫຼື ມີການສະໜອງ ວຽກເຮັດງານທຳທີ່ເທົ່າທຽມກັນ ຫຼື ໂອກາດໃນການສ້າງລາຍຮັບທີ່ | + | ມີການເພີ່ມຂຶ້ນ ຂອງວຽກເຮັດງານທຳຢູ່ໃນລະດັບຊາດ, ລະດັບພາກ ຫຼື ລະດັບທ້ອງຖິ່ນ.<br>.............................................................. | |
| | | 0 | ບໍ່ມີການປ່ຽນແປງຫຼາຍ ໃນການສ້າງວຽກເຮັດງານທຳ ຖ້າສົມທຽບໃສ່ຂໍ້ມູນເບື້ອງຕົ້ນຂອງໂຄງການ,ບໍ່ມີການສ້າງວຽກເຮັດງານທຳ ຫຼື ເສຍວຽກເຮັດງານທຳ.<br>.............................................................. | |
| | | - | • ວຽກງານທັງໝົດ ທີ່ໄດ້ກຳນົດໃນໂຄງການໃນເມື່ອກ່ອນຈະບໍ່ມີ. | |

| | | | | |
|---|---|---|---|---|
| | ເທົ່າທຽມກັນ. | | • ເຮັດໃຫ້ບໍ່ມີວຽກເຮັດງານທຳ. | |
| 2.6 | ການປັບປຸງສິ່ງກໍ່ສ້າງພື້ນຖານໂຄງລ່າງ ແລະ ການບໍລິການໃຫ້ແກ່ປະຊາຊົນ (ຕົວຢ່າງ: ພະລັງງານ, ນໍ້າດື່ມ, ສາທາລະນະສຸກ) | +<br><br>0<br><br>- | ມີການສະໜອງສິ່ງກໍ່ສ້າງໂຄງລ່າງພື້ນຖານໃຫ້ແກ່ຊຸມຊົນ (ນໍ້າສ້າງ, ຖະໜົນ, ໂຮງຮຽນ, ສາທາລະນະສຸກ ແລະ ອື່ນໆ).<br>..............................................................<br>ບໍ່ມີຜົນກະທົບຕໍ່ສິ່ງກໍ່ສ້າງໂຄງລ່າງພື້ນຖານຂອງຊຸມຊົນ<br>..............................................................<br>ສິ່ງກໍ່ສ້າງໂຄງລ່າງພື້ນຖານຂອງຊຸມຊົນເສື່ອມໂຊມ (ນໍ້າສ້າງ, ຖະໜົນ, ໂຮງຮຽນ, ສາທາລະນະສຸກ ແລະ ອື່ນໆ). | |
| 2.7 | ມີສິ່ງລົບກວນ ແລະ ຄວາມສ່ຽງຕໍ່ປະຊາຊົນ ຢູ່ໃນເຂດໂຄງການ (ຄວາມສ່ຽງທາງດ້ານ ອຸບັດຕິເຫດ, ສຽງດັງ, ຂີ້ຝຸ່ນ) | +<br><br>0<br><br>- | ມີການຫຼຸດຜ່ອນຄວາມສ່ຽງ ແລະ ສິ່ງລົບກວນຕໍ່ປະຊາຊົນ ຢູ່ໃນເຂດໂຄງການ ຖ້າສົມທຽບກັບຂໍ້ມູນເບື້ອງຕົ້ນໂຄງການ ທີ່ລະບຸໄວ້ໃນເອກະສານ ໂຄງການກົນໄກການພັດທະນາສະອາດ .<br>............................................................<br>ບໍ່ມີການປ່ຽນແປງຄວາມສ່ຽງ ແລະ ສິ່ງລົບກວນຕໍ່ປະຊາຊົນ ທີ່ຢູ່ໃນເຂດໂຄງການ ຖ້າສົມທຽບໃສ່ຂໍ້ມູນເບື້ອງຕົ້ນໂຄງການ ທີ່ລະບຸຢູ່ໃນເອກະສານໂຄງການກົນໄກການພັດທະນາສະອາດ .<br>............................................................<br>ມີການເພີ່ມຂຶ້ນຂອງລະດັບຄວາມສ່ຽງ ແລະ ສິ່ງລົບກວນສຳລັບປະຊາຊົນ ຢູ່ໃນເຂດໂຄງການ ຖ້າສົມທຽບໃສ່ຂໍ້ມູນເບື້ອງຕົ້ນ ທີ່ກຳນົດຢູ່ໃນເອກະສານໂຄງການກົນໄກການພັດທະນາສະອາດ . | |
| 3. | ດ້ານເສດຖະກິດ | | | |
